PHU BIA MINING – A MEMBER OF THE PANAUST GROUP OF COMPANIES

7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

# MEDIA RELEASE

28 May 2021

## Phu Bia Mining supports Government's vaccination program

Between 25-27 May 2021, medical teams from the Xaisomboun Provincial Department of Health administered COVID-19 vaccinations to a number of Phu Bia Mining's (PBM) workforce at its Phu Kham Copper-Gold and Ban Houayxai Gold-Silver Operations. Teams from the Province were supported by onsite PBM medical staff.

The Company followed the Ministry of Health's vaccination requirements and protocols, enabling the COVID-19 vaccinations to be delivered in a safe, timely, orderly and verifiable manner. Members of the workforce who are vaccinated were also issued a Government vaccination green card with the details of the COVID-19 vaccination dose.

The vaccinations signalled the beginning of the Company's COVID-19 Vaccination Program which supports the Government of Laos' national vaccination program.

PBM Chairman, Mr Chanpheng Bounnaphol said the Company was taking guidance from the Xaisomboun Provincial Department of Health as the health experts where it's Phu Kham and Ban Houayxai Operations are located.

Additionally, earlier this month, PBM supported the Government's national vaccination program and purchased 30,000 COVID-19 vaccination doses. This support was formalised at a presentation ceremony attended by Deputy Prime Minister Professor Dr Kikeo Khaykhamphithoune.

"As a large employer in country, PBM values itself as a responsible corporate citizen and is committed to helping the Government and people of Laos manage and control the spread of COVID-19.

"Our desire is to work closely with the Ministry of Health to assist with the vaccination of the citizens of Laos more broadly, while also keeping our workforce healthy and safe and our operating sites COVID-19 free.

"We know that health experts advise that vaccination is the most effective way to protect against COVID-19. Vaccinating our people will be another arsenal in the fight against COVID-19," Mr Bounnaphol said.

Mr Bounnaphol further explained that the Company has in place an extensive and robust system to manage personnel movement approved by the National COVID-19 Taskforce. This includes 14 days quarantine for all incoming personnel, accompanied by a PCR test at the end of the quarantine period prior to entering a PBM operating site.

2019 WINNER AUSTMINE MINER INNOVATION AWARD | AUSTMINE 2019 MINING INNOVATION CONFERENCE & EXHIBITION

2018 WINNER FRIEND OF LAOS | 2018 WINNER FRIEND OF ASEAN AWARDS | ASEAN BUSINESS AWARDS 2018

2018 WINNER ASEAN OSHNET EXCELLENCE AWARD OHS MANAGEMENT

2017 LAO PDR LABOUR ORDER MEDAL | 2011 LAO PDR LABOUR ORDER MEDAL CLASS 1 POVERTY REDUCTION

2015 WINNER AUSTRALIAN CLIMATE LEADERSHIP AWARDS MOST PROFITABLE CARBON REDUCTION ACTIVITY | CDP DRIVING SUSTAINABLE ECONOMIES



*Above: Phu Bia Mining employees with Provincial Medical team members from Xaisomboun Province at the Phu Kham Mine COVID-19 vaccination station.*

**For further information please contact:**


Keoleuthsamay Thammalangsy

T: 020 268 000

E: keoleutsamay.thammalangsy@pbm.panaust.com

Phomvihane Thiepphougphane

T: 021 268 000

E: Phomvihane.Thiepphougphane@pbm.panaust.com

PHU BIA MINING – A MEMBER OF THE PANAUST GROUP OF COMPANIES
7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

**ຂ່າວສານ**

28 ພຶດສະພາ 2021

## ບໍລິສັດ ພູເບ້ຍ ມາຍນິງ ສະໜັບສະໜູນການສັກວັກຊີນກັນໂຄວິດ-19 ຂອງລັດຖະບານ

ລະຫວ່າງວັນທີ 25-27 ພຶດສະພາ 2021, ທີມແພດຈາກພະແນກ ສາທາລະນະສຸກແຂວງ ໄຊສົມບູນ ໄດ້ຈັດຕັ້ງການສັກວັກຊີນກັນພະຍາດໂຄວິດ-19 ໃຫ້ພະນັກງານ ທີ່ເປັນກຸ່ມບູລິມະສິດຂອງບໍລິສັດ ພູເບ້ຍ ມາຍນິງ (PBM) ຢູ່ໂຮງງານຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ ແລະ ໂຮງງານຂຸດຄົ້ນ-ປຸງແຕ່ງຄຳ-ເງິນບ້ານ ຫ້ວຍຊາຍ. ການສັກວັກຊີນແມ່ນໄດ້ຮັບການອຳນວຍຄວາມສະດວກໂດຍທີມແພດປະຈຳສະໜາມຂອງບໍລິສັດ.

ບໍລິສັດ ພູເບ້ຍ ມາຍນິງ ປະຕິບັດຕາມລະບຽບການ ແລະ ມາດຕະການສັກວັກຊີນຂອງກະຊວງ ສາທາລະນະສຸກ, ເຊິ່ງເຮັດໃຫ້ການສັກວັກຊີນໂຄວິດ-19 ມີຄວາມປອດໄພ, ທັນເວລາ, ເປັນລະບຽບຮຽບຮ້ອຍ ແລະ ມີການຢັ້ງຢືນ. ພະນັກງານທີ່ສັກວັກຊີນແລ້ວ ໄດ້ຮັບບັດຢັ້ງຢືນການສັກຢາສີຂຽວທີ່ລັດຖະບານໄດ້ອອກໃຫ້ເຊິ່ງມີລາຍລະອຽດຂອງວັກຊີນກັນພະຍາດໂຄວິດ-19.

ການສັກວັກຊີນເປັນສັນຍານດີຂອງການເລີ່ມຕົ້ນໂຄງການສັກວັກຊີນກັນພະຍາດໂຄວິດ-19 ຂອງບໍລິສັດທີ່ສະໜັບສະໜູນ ການສັກວັກຊີນຂອງລັດຖະບານ ລາວ.

ທ່ານ ຈັນເພັງ ບຸນນະຜົນ, ປະທານບໍລິສັດ ພູເບ້ຍ ມາຍນິງ ກ່າວວ່າ ບໍລິສັດ ແມ່ນປະຕິບັດຄຳແນະນຳຈາກພະແນກ ສາທາລະນະສຸກແຂວງ ໄຊສົມບູນ, ທີມຊ່ຽວຊານແພດປະຈຳແຂວງທີ່ໂຮງງານ ພູຄຳ ແລະ ບ້ານ ຫ້ວຍຊາຍຕັ້ງຢູ່.

ນອກຈາກນີ້ ໃນຕົ້ນເດືອນ ພຶດສະພາ, ບໍລິສັດ ໄດ້ສະໜັບສະໜູນ ວັກຊີນກັນພະຍາດໂຄວິດ-19 ຈຳນວນ 30,000 ໂດສ ເຂົ້າໃນໂຄງການສັກວັກຊີນກັນພະຍາດໂຄວິດ-19 ລະດັບຊາດຂອງລັດຖະບານ. ການມອບຮັບການສະໜັບສະໜູນ ແມ່ນຈັດຂຶ້ນຢູ່ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ນຳໂດຍທ່ານ ປ.ອ. ດຣ ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ.

ທ່ານ ປະທານກ່າວວ່າ: “ໃນຖານະເປັນຜູ້ຈ້າງງານຂະໜາດໃຫຍ່ໃນປະເທດ, ບໍລິສັດ ພູເບ້ຍ ມາຍນິງ ເປັນບໍລິສັດ ທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ມຸ້ງໝັ້ນຊ່ວຍເຫຼືອລັດຖະບານ ແລະ ປະຊາຊົນລາວ ຄຸ້ມຄອງ ແລະ ຄວບຄຸມການແຜ່ລະບາດຂອງໂຄວິດ-19.

“ຄວາມປາດຖະໜາຂອງບໍລິສັດ ແມ່ນເຮັດວຽກຢ່າງໃກ້ຊິດນຳກະຊວງ ສາທາລະນະສຸກ ເພື່ອໃຫ້ປະຊາຊົນລາວໄດ້ຮັບການສັກວັກຊີນກວ້າງຂວາງຕື່ມຂຶ້ນ, ໃນເວລາດຽວກັນ ກໍ່ເພື່ອຮັກສາແຮງງານຂອງບໍລິສັດໃຫ້ມີສຸຂະພາບແຂງແຮງ ແລະ ປອດໄພ ແລະ ດຳເນີນງານປາດສະຈາກໂຄວິດ-19.

ທ່ານ ຈັນເພັງກ່າວຕື່ມວ່າ “ບໍລິສັດ ຮູ້ດີວ່າ ຊ່ຽວຊານແພດ ໄດ້ຢັ້ງຢືນວ່າວັກຊີນແມ່ນວິທີມີປະສິດທິພາບຫຼາຍສຸດ ເພື່ອປ້ອງກັນໂຄວິດ-19. ການສັກວັກຊີນໃຫ້ພະນັກງານຂອງບໍລິສັດ ແມ່ນຂະບວນການປຸກລະດົມອີກດ້ານໃນການຕໍ່ສູ້ກັບໂຄວິດ-19”.

2019 WINNER
AUSTMINE MINER INNOVATION AWARD
AUSTMINE 2019 MINING INNOVATION CONFERENCE & EXHIBITION

2018 WINNER
FRIEND OF LAOS
2018 WINNER
FRIEND OF ASEAN AWARDS
ASEAN BUSINESS AWARDS 2018

2018 WINNER
ASEAN OSHNET EXCELLENCE AWARD
OHS MANAGEMENT

2017
LAO PDR LABOUR ORDER MEDAL
2011
LAO PDR LABOUR ORDER MEDAL CLASS 1
POVERTY REDUCTION

2015 WINNER
AUSTRALIAN CLIMATE LEADERSHIP AWARDS
MOST PROFITABLE CARBON REDUCTION ACTIVITY
CDP DRIVING SUSTAINABLE ECONOMIES

ທ່ານ ຈັນເພັງ ອະທິບາຍຕື່ມວ່າ ບໍລິສັດ ພູເບ້ຍ ມາຍນິງ ມີລະບົບທີ່ຮັດກຸມ ແລະ ຮອບດ້ານ ເພື່ອຄຸ້ມຄອງການເຄື່ອນຍ້າຍບຸກຄະລາກອນຂອງຕົນໂດຍໄດ້ຮັບອະນຸມັດຈາກຄະນະສະເພາະກິດສູນກາງ. ນີ້ລວມມີການກັກໂຕເປັນເວລາ 14 ວັນສໍາລັບບຸກຄະລາກອນທັງໝົດທີ່ຈະເດີນທາງເຂົ້າສະໜາມ, ພ້ອມທັງການກວດຫາເຊື້ອແບບພີຊີອາ ໃນຕອນທ້າຍຂອງການກັກໂຕ ກ່ອນເຂົ້າເຂດດໍາເນີນງານຂອງບໍລິສັດ ພູເບ້ຍ ມາຍນິງ.



*ເທິງ: ພະນັກງານບໍລິສັດ ພູເບ້ຍ ມາຍນິງ ຮັບການສັກວັກຊີນຈາກທີມແພດຂອງພະແນກສາທາລະນະສຸກແຂວງ ໄຊສົມບູນ ຢູ່ຈຸດສັກວັກຊີນກັນພະຍາດໂຄວິດ-19 ໂຮງງານ ພູຄໍາ.*

## ສໍາລັບຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:

ແກ້ວເລີດສະໄໝ ທໍາມະລັງສີ

T: 020 268 000

E: keoleutsamay.thammalangsy@pbm.panaust.com

ພົມວິຫານ ທຽບພົງພັນ

T: 021 268 000

E: Phomvihane.Thiepphougphane@pbm.panaust.com